ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

BANQUE POUR LE COMMERCE EXTERIEUR LAO PUBLIC

# ບົດຂ່າວກອງປະຊຸມທົບທວນຜົນການດຳເນີນທຸລະກິດ ປະຈຳປີ 2020 ແລະ ທິດທາງແຜນການ ຂອງ ທຄຕລ ທົ່ວລະບົບ ປະຈຳປີ 2021.

ໃນວັນທີ 27-28 ມັງກອນ 2021 ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ຈັດກອງປະຊຸມທົບທວນຜົນການດຳເນີນທຸລະກິດ ປະຈຳປີ 2020 ແລະ ທິດທາງແຜນການ ຂອງ ທຄຕລ ທົ່ວລະບົບ ປະຈຳປີ 2021 ຂຶ້ນ ທີ່ໂຮງແຮມດອນຈັນພາເລດ ນະຄອນຫຼວງວຽງຈັນ ພາຍໃຕ້ການເປັນປະທານຂອງ **ທ່ານ ພູຂົງ ຈັນທະຈັກ** ຜູ້ອຳນວຍການໃຫຍ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ໂດຍມີຄະນະອຳນວຍການ, ບັນດາພະແນກ-ສູນ ແລະ ສາຂາໃນທົ່ວລະບົບ ພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງ ລວມທັງໝົດ 80 ທ່ານ ( ໃນນັ້ນມີ 03 ສາຂາຄື: ສາຂາບໍ່ແກ້ວ, ຫຼວງນ້ຳທາ ແລະ ຈຳປາສັກ ແມ່ນໄດ້ປະຊຸມຜ່ານລະບົບອອນລາຍຈາກສາຂາ).




ຮູບທີ1: ຮູບພາບຖ່າຍລວມ.

ກອງປະຊຸມໄດ້ຕີລາຄາຜົນການດຳເນີນທຸລະກິດຂອງທຄຕລ ປີ 2020 ແລະ ປຶກສາຫາລືກຳນົດທິດທາງແຜນການດຳເນີນທຸລະກິດ ປະຈຳປີ 2021 ໄດ້ມີການລາຍງານບັນຫາຜົນກະທົບຈາກສະພາບເສດຖະກິດພາຍໃຕ້ສະຖານະການ COVID-19 ໃນປີ 2020 ແລະ ສິ່ງທ້າທາຍໃນຕໍ່ໜ້າ ໄດ້ມີການແລກປ່ຽນບົດຮຽນ ແລະ ປຶກສາຫາວິທີການແກ້ໄຂຂໍ້ຫຍຸ້ງຍາກ ແລະ ແກ້ໄຂຂໍ້ສະເໜີຕ່າງໆຂອງທຄຕລ ສຳນັກງານໃຫຍ່ ແລະ ບັນດາສາຂາເປັນຕົ້ນແມ່ນ: ວຽກງານການຄຸ້ມຄອງບໍລິຫານສິນເຊື່ອ, ຜົນກະທົບບັນຫາອັດຕາແລກປ່ຽນ, ການບໍລິການລູກຄ້າລາຍໃຫຍ່, ການບໍລິຫານເງິນສົດ, ການສົ່ງເສີມດ້ານການຕະຫຼາດ, ການຂະຫຍາຍຕາໜ່າງບໍລິການ, ວຽກງານບຸກຄະລາກອນ, ການຄຸ້ມຄອງ ແລະ ການພັດທະນາລະບົບລະບົບໄອທີແບບໃໝ່ ແລະ ການຄຸ້ມຄອງຄວາມປອດໄພໃນການບໍລິການດ້ານຕ່າງໆ , ວຽກງານລະບົບບັນຊີ, ວຽກງານກວດກາພາຍໃນ, ການຄຸ້ມຄອງຄວາມສ່ຽງແບບໃຫມ່ , ການຕ້ານການຟອກເງິນ ແລະ ວຽກງານດ້ານນິຕິກຳ, ທັງໝົດນັ້ນກໍ່ເພື່ອເຮັດໃຫ້ການດຳເນີນທຸລະກິດຂອງ ທຄຕລ ໃນປີ 2021 ມີຜົນກຳໄລສ້າງຜົນປະໂຫຍດສູງສຸດໃຫ້ຜູ້ຖືຮຸ້ນ ທຄຕລ. ປີ 2020 ໃນສະພາບເສດຖະກິດມີຄວາມຫຍຸ້ງຍາກຍ້ອນຜົນກະທົບຈາກການລະບາດຂອງ Covid-19 ແຕ່ຄະນະບໍລິຫານງານ ທຄຕລ ກໍ່ໄດ້ເອົາໃຈໃສ່ບໍລິຫານງານ, ສືບຕໍ່ພັດທະນາຜະລິດຕະພັນຕ່າງໆໃຫ້ບໍລິການໄດ້ຢ່າງຕໍ່ເນື່ອງ, ຜົນການດຳເນີນງານ ໃນປີ 2020 ກໍ່ປະຕິບັດໄດ້ດີພໍສົມຄວນ.

ນອກຈາກນັ້ນ, ກອງປະຊຸມຍັງໄດ້ຮັບທິດຊີ້ນຳໃນການປະຕິບັດວຽກງານຕ່າງໆຈາກຄະນະອຳນວຍການ, ຮັບຮູ້ທິດທາງໃນການດຳເນີນງານຂອງ ທຄຕລ ໃນປີ 2021 ເພື່ອບັນດາສາຂາພ້ອມກັນນຳເອົາເນື້ອໃນຈິດໃຈກອງປະຊຸມໄປເຜີຍແຜ່ຜັນຂະຫຍາຍໃນການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ.




ຮູບທີ 2: ພາບຄະນະປະທານກອງປະຊຸມ.



ຮູບທີ3: ພາບບັນຍາກາດກອງປະຊຸມ.